ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ແຂວງບໍລິຄຳໄຊ
ພະແນກ ກະສິກຳ ແລະ ປ່າໄມ້
ໂຄງການຄຸ້ມຄອງປ່າປ້ອງກັນແຫ່ງຊາດນ້ຳມ່ວນ-ນ້ຳຍ້ອງ

ບົດສະຫລຸບ 1 ປີ

ໂຄງການຄຸ້ມຄອງປ່າປ້ອງກັນແຫ່ງຊາດ ນ້ຳມ່ວນ-ນ້ຳຍ້ອງໄລຍະທີ II (ເຂດຍອດນ້ຳຍ້ອງ)

ປະຈຳ ສົກປີ 2017 - 2018

ໂດຍ: ພະແນກ ກະສິກຳ ແລະ ປ່າໄມ້ແຂວງ ບໍລິຄຳໄຊ

I. ພາກສະເໜີ

- ຊື່ໂຄງການ: ໂຄງການຄຸ້ມຄອງປ່າປ້ອງກັນແຫ່ງຊາດ ເຂດອ່າງໂຕ່ງນ້ຳຍອງ ແຂວງບໍລິຄຳໄຊ
- ອົງການຈັດຕັ້ງ: ພະແນກກະສິກຳ ແລະ ປ່າໄມ້ແຂວງບໍລິຄຳໄຊ
- ງົບປະມານ 2,796,000,000.00 ກີບ
- ໄລຍະປະຕິບັດຕາມສັນຍາ : ແຕ່ວັນທີ 14 ມີນາ 2016 ມື້ສຳເລັດໂຄງການ 14 ມີນາ 2020
- ໄລຍະປະຕິບັດໂຄງການຕົວຈິງ :

1.1. ຈຸດປະສົງຂອງໂຄງການ

ເພື່ອສ້າງຄວາມອາດສາມາດໃນການຮ່ວມມືແບບມີສ່ວນຮ່ວມ ລະຫວ່າງ ລັດ ກັບ ຊຸມຊົນ ໃນການຄຸ້ມຄອງປົກປັກຮັກສາພັດທະນາປ່າປ້ອງກັນແຫ່ງຊາດນ້ຳມ່ວນ-ນ້ຳຍ້ອງ ພ້ອມທັງປັບປຸງຊີວິດການເປັນຢູ່ປະຊາຊົນໃຫ້ນັບມື້ນັບດີຂຶ້ນ.

1.2. ຕົວຊີ້ວັດໂຄງການ

ຕົວຊີ້ວັດ	ແຜນການ
ຕົວຊີ້ວັດ 1: ເຂດທີ່ຢູ່ໃນການປົກປັກຮັກສາຊີວະນາໆພັນ ທີ່ຖືກວັດແທກໂດຍຄະແນນປະສິດທິຜົນຂອງການຄຸ້ມຄອງ (ປະຈຳປີ)	44
ຕົວຊີ້ວັດ 5: ການຈັດຕັ້ງບ້ານ ທີ່ຢູ່ໃນແລະອ້ອມແອ້ມປ່າສະຫງວນ ທີ່ສະໜັບສະໜູນໂດຍ ກປສ ທີ່ເຮັດຕາມເງື່ອນໄຂຂອງສັນຍາອະນຸລັກ (ສະສົມ)	3
1.1: ຜູ້ໄດ້ຮັບຜົນປະໂຫຍດໂດຍກົງ (ໃນນີ້ມີຍິງເທົ່າໃດ) ໂດຍວັດແທກຕາມຈຳນວນພະນັກງານທີ່ໄດ້ເຂົ້າໃນຊຸດຮຽນສຳເລັດ ກ່ຽວກັບພື້ນຖານຂອງການຄຸ້ມຄອງການຄ້າສັດປ່າຫຼືປ່າໄມ້	158
ຈຳນວນແມ່ຍິງ	32
% ແມ່ຍິງ	20%

II. ກິດຈະກຳໂຄງການ (ຕາມແຜນແມ່ບົດ)

ອົງປະກອບ 1: ສ້າງຄວາມສາມາດໃນການຄຸ້ມຄອງປ່າປ້ອງກັນ

ກິດຈະກຳ 1.1: ຝຶກອົບຮົມກ່ຽວກັບການຄຸ້ມຄອງກອງທຶນບ້ານ(ສຳລັບປະຊາຊົນ)

ກິດຈະກຳ 1.2: ຝຶກອົບຮົມກ່ຽວກັບການປູກຝັງ (ສຳລັບປະຊາຊົນ)

ກິດຈະກຳ 1.3: ຝຶກອົບຮົມກ່ຽວກັບການລ້ຽງສັດ (ສຳລັບປະຊາຊົນ)

ກິດຈະກຳ 1.4: ໄປປະຊຸມນຳ ປກສ

ກິດຈະກຳ 1.5: ກອງປະຊຸມສ້າງຄວາມເຂົ້າໃຈຂັ້ນບ້ານ

ກິດຈະກຳ 1.6: ທັດສະນະສຶກສາພາຍໃນ.

ກິດຈະກຳ 1.7: ກອງປະຊຸມສ້າງຄວາມເຂົ້າໃຈຂັ້ນແຂວງ

ກິດຈະກຳ 1.8: ກອງປະຊຸມສ້າງຄວາມເຂົ້າໃຈຂັ້ນເມືອງ

ອົງປະກອບ 2. ສະໜັບສະໜູນ ຄຸ້ມຄອງປ່າປ້ອງກັນແຫ່ງຊາດ

ກິດຈະກຳ 2.1: ວຽກໂຄສະນາເຜີຍແຜ່ ແລະ ປູກຈິດສຳນຶກ

ກິດຈະກຳ 2.2.: ຄຸ້ມຄອງຈັດສັນທີ່ດິນ

ກິດຈະກຳ 2.3.: ປັບປຸງຊີວິດການຢູ່ ແລະ ສ້າງກອງທຶນອະນຸລັກ

ກິດຈະກຳ 2.4: ສ້າງຈຸດກວດກາ ແລະ ການກວດກາລາດຕະເວນ

ອົງປະກອບ 3: ການຕິດຕາມບ້ານເປົ້າ ໝາຍ ໃນເຂດອ່າງໂຕ່ງນ້ຳຍ້ອງເປັນກິດຈະກຳທີ່ມີຄວາມຈຳເປັນ ທີ່ຈະຕ້ອງໄດ້ຈັດຕັ້ງປະຕິບັດຢ່າງຕໍ່ເນື່ອງ ເພື່ອເປັນການສືບຕໍ່ການສ້າງຄວາມເຂັ້ມແຂງໃຫ້ແກ່ບ້ານເປົ້າໝາຍໂຄງການ ທີ່ໄດ້ຜ່ານການຈັດຕັ້ງປະຕິບັດ ຈຳນວນ 21 ບ້ານ (ບ້ານຂອງໂຄງການ ນ້ຳຍ້ອງຕອນເໜືອເກົ່າ 9 ບ້ານ, ບ້ານຂອງໂຄງການນ້ຳຍ້ອງຕອນໃຕ້ 12 ບ້ານ) ແລະ ບ້ານຂອງໂຄງການເຄືອຂ່າຍອະນຸລັກຊຸມຊົນ 12 ບ້ານ ເຊິ່ງກິດຈະກຳນີ້ແມ່ນຈະໄດ້ ຈັດຕັ້ງປະຕິບັດ ໂດຍການສົມທົບ ແລະ ປະສານງານກັນລະຫວ່າງ ຜູ້ຮັບຜິດຊອບໂຄງການ ແລະ ພະນັກງານເມືອງທີ່ກ່ຽວຂ້ອງ ເພື່ອຕິດຕາມ ແລະ ຊຸກຍູ້ໃນການຈັດຕັ້ງປະຕິບັດ ວຽກງານອະນຸລັກ ແລະ ວຽກງານກອງທຶນບ້ານ ໂດຍຈະປະຕິບັດໃນ 2 ຄັ້ງ ຕໍ່ປີ

ອົງປະກອບ 4: ຄຸ້ມຄອງບໍລິຫານໂຄງການ

1. ສ້າງທີມຈັດຕັ້ງປະຕິບັດໂຄງການ ແລະ ສ້າງຄວາມເຂົ້າໃຈຮ່ວມກັນໃນທີມງານ
2. ຈັດຊື້ອຸປະກອນ ໂຄງການ
3. ສ້າງບົດລາຍງານປະຈຳ 6 ເດືອນ ແລະ ປີ ຊຶ່ງຈະໄດ້ສົ່ງໃຫ້ຫ້ອງການ ກປສ ແລະ ຂຶ້ນແຜນການ 6 ເດືອນ ແລະ ປີ ຕໍ່ໄປ ໂດຍອີງໃສ່ແຜນລວມ.
4. ປະສານກັບອົງການກ່ຽວຂ້ອງອື່ນໆ ກ່ຽວກັບການຄຸ້ມຄອງໂຄງການ ໂດຍສະເພາະ ກັບ ກປສ
5. ປະເມີນຜົນ.

ຄາດຄະເນຜົນໄດ້ຮັບໂຄງການທີ່ວາງໄວ້ໃນປີ 2018 ໃນບົດສະເໜີໂຄງການ

ລະຫັດ	ລາຍການ	ຜົນໄດ້ຮັບທີ່ວາງໄວ້	ບໍ່ສຳເລັດ
ອົງປະກອບ 1. ສ້າງຄວາມເຂັ້ມແຂງໃນການຄຸ້ມຄອງປ່າປ້ອງກັນ			
C1.04	ໄປປະຊຸມນຳ ກປສ	1. ຮ່ວມປຶກສາຫາລືການກະກຽມລາຍງານກອງປະຊຸມຜູ້ມີສ່ວນຮ່ວມນຳ ກປສ; 2. ຮ່ວມປຶກສາຫາລືກະກຽມຂຽນບົດສະເໜີໂຄງສ້າງບ້ານອະນຸລັກ.1. ການປຶກສາຫາລືວຽກງານອື່ຊາການກ່ຽວກັບການຄຸ້ມຄອງປ່າສະຫງວນ ແລະ ປ່າປ້ອງກັນ. 3. ບົດຮຽນການຮ່ວມມື ແລະ ຄຸ້ມຄອງໂຄງການຍ່ອຍ ນຳ ກ ປ ສ. 4. ວຽກງານໂຄງຮ່າງການຈັດຕັ້ງ ການຄຸ້ມຄອງປ່າສະຫງວນ ແລະ ປ່າປ້ອງກັນ.	
C1.05	ສ້າງຄວາມເຂັ້ມແຂງໃນການສືບຕໍ່ໂຄງການໃໝ່	ສຳເລັດກອບແນວຄວາມຄິດເບື້ອງຕົ້ນ ແຕ່ຍັງບໍ່ທັນໄດ້ເປີດກອງປະຊຸມເພື່ອປຶກສາຫາລືກັບພາກສ່ວນທີ່ກ່ຽວຂ້ອງນັບແຕ່ສູນກາງເຖິງທ້ອງຖິ່ນ ໂດຍສະເພາະແມ່ນການກຳນົດໜ້າວຽກ ແລະ ວິທີຈັດຕັ້ງປະຕິບັດຕໍ່ກັບໂຄງການໄລຍະທີ3ນີ້.	ບໍ່ສຳເລັດ

C1.06	ທັດສະນະສຶກສາພາຍໃນ.	ສຳເລັດແຕ່ປີ2017	
C1.07	ກອງປະຊຸມສ້າງຄວາມເຂົ້າໃຈຂັ້ນເມືອງ	1. ກອງປະຊຸມຜ່ານເງື່ອນໄຂ ແລະ ມາດ ຖານການສ້າງ ບ້ານອະນຸລັກ ເມືອງຄຳເກີດມີຜູ້ເຂົ້າຮ່ວມ 30 ທ່ານ ຍິງ 8 ທ່ານ; 2. ກອງປະຊຸມຜ່ານເງື່ອນໄຂ ແລະ ມາດ ຖານການສ້າງ ບ້ານອະນຸລັກ ເມືອງປາກກະດິງ ມີຜູ້ເຂົ້າຮ່ວມ 24 ທ່ານ ຍິງ 6 ທ່ານ; 3. ກອງປະຊຸມຜ່ານເງື່ອນໄຂ ແລະ ມາດ ຖານການສ້າງ ບ້ານອະນຸລັກ ເມືອງວຽງທອງ ມີຜູ້ເຂົ້າຮ່ວມ 23 ທ່ານ ຍິງ 8 ທ່ານ; 4. ກອງປະຊຸມຜ່ານເງື່ອນໄຂ ແລະ ມາດ ຖານການສ້າງ ບ້ານອະນຸລັກ ເມືອງໄຊຈຳພອນ ມີຜູ້ເຂົ້າຮ່ວມ 34 ທ່ານ ຍິງ 6 ທ່ານ	
C1.08	ກອງປະຊຸມສ້າງຄວາມເຂົ້າໃຈຂັ້ນແຂວງ	1. ສຳເລັດກອງປະຊຸມປະຈຳປີ2017 ມີຜູ້ເຂົ້າຮ່ວມທັງ ໝົດ 54 ທ່ານ, ຍິງ20 ທ່ານ; 2. ກອງປະຊຸມຜ່ານເງື່ອນໄຂ ແລະ ມາດ ຖານການສ້າງ ບ້ານອະນຸລັກ ຈາກ 4 ເມືອງ ທີ່ເມືອງຄຳເກີດມີຜູ້ ເຂົ້າຮ່ວມ 47 ທ່ານ ຍິງ 6 ທ່ານ	
C1.09	ກອງປະຊຸມສ້າງຄວາມເຂົ້າໃຈຂັ້ນບ້ານ ແລະ ຕິດຕາມ	1. ຕິດຕາມການກະກຽມຈັດຕັ້ງປະຕິບັດການສ້າງເປັນ ບ້ານ ອານຸລັກ ເມືອງປາກກະດິງ ມີຜູ້ເຂົ້າຮ່ວມ 127 ທ່ານ, ຍິງ 41 ທ່ານ	
ອົງປະກອບ 2. ສະນັບສະໜຸນການຄຸ້ມຄອງປ່າປ້ອງກັນ ແລະ ການປັບປຸງຊີວິດການເປັນຢູ່ຂອງປະຊາຊົນ			
C2.06	ລົງປັກຫລັກໝາຍ, ປ້າຍ	ສຳເລັດແຕ່ປີ2017	
C2.11	ສະນັບສະໜຸນການເຄື່ອນໄຫວກວດກາ ລາດຕະເວນຂອງຈຸດກວດກາ	ຈັດຕັ້ງປະຕິບັດຕິດຕາມກວດກາ 2 ຈຸດກວດກາ ໂດຍສົມທົບກັບບ້ານປົກກະຕິຕາມແຜນການທີ່ວາງໄວ້	
C2.12	ສະນັບສະໜຸນກອງທຶນອະນຸລັກຂອງຊຸມຊົນ	ສຳເລັດແຕ່ປີ2017	
C2.13	ລົງປ່ອຍກອງທຶນອະນຸລັກຂອງຊຸມຊົນ	ສຳເລັດແຕ່ປີ2017	
ອົງປະກອບ 3. ການຕິດຕາມບ້ານເປົ້າໝາຍໃນເຂດອ່າງໂຕ່ງນ້ຳຍ້ອງ			
C3	ລົງຢ້ຽມຢາມບ້ານເປົ້າໝາຍໂຄງການທີ່ ຜ່ານມາ		
ອົງປະກອບ 4. ການບໍລິຫານ ແລະ ຄຸ້ມຄອງໂຄງການ			
C4.01	ຈັດພິມ ແລະ ສຳເນົາຕ່າງໆຂອງກອງປະ ຊຸມ	ເອກະສານການເງິນສົ່ງ ກປສ ແຕ່ລະເດືອນ ໃນ 06 ເດືອນ.	
C4.05	ບຳລຸງຮັກສາພາຫະນະ ແລະ ອຸປະກອນ	ສ້ອມແປງລົດ 2244 ແລະ ລົດ 0387.	
C4.06	ອຸປະກອນຮັບໃຊ້ຫ້ອງການຕ່າງໆ	ສຳເລັດຕາມແຜນການ.	
C4.07	ບຳລຸງຮັກສາຫ້ອງການຂັ້ນແຂວງ	ສຳເລັດແຕ່ປີ2017	
C4.08	ບຳລຸງຮັກສາຫ້ອງການຂັ້ນເມືອງ	ສຳເລັດແຕ່ປີ2017	
C4.09	ປະເມີນຜົນ	ລໍຖ້າທິມງານຈາກ ກປສ	ບໍ່ສຳເລັດ

III. ຜົນໄດ້ຮັບຂອງໂຄງການໃນ 1 ປີ 2017-2018

ລະຫັດ	ລາຍການ	ຜົນໄດ້ຮັບທີ່ວາງໄວ້	ບໍ່ສຳເລັດ
ອົງປະກອບ 1. ສ້າງຄວາມເຂັ້ມແຂງໃນການຄຸ້ມຄອງປ່າປ້ອງກັນ			
C1.04	ໄປປະຊຸມນຳ ກປສ	ສຳເລັດ 100%	
C1.05	ສ້າງຄວາມເຂັ້ມແຂງໃນການສືບຕໍ່ໂຄງການໃໝ່		ບໍ່ສຳເລັດ
C1.06	ທັດສະນະສຶກສາພາຍໃນ.	ສຳເລັດແຕ່ປີ2017	
C1.07	ກອງປະຊຸມສ້າງຄວາມເຂົ້າໃຈຂັ້ນເມືອງ	ສຳເລັດ 100%	
C1.08	ກອງປະຊຸມສ້າງຄວາມເຂົ້າໃຈຂັ້ນແຂວງ	ສຳເລັດ 100%	
C1.09	ກອງປະຊຸມສ້າງຄວາມເຂົ້າໃຈຂັ້ນບ້ານ ແລະ ຕິດຕາມ	ສຳເລັດ 100%	
ອົງປະກອບ 2. ສະນັບສະໜຸນການຄຸ້ມຄອງປ່າປ້ອງກັນ ແລະ ການປັບປຸງຊີວິດການເປັນຢູ່ຂອງປະຊາຊົນ			
C2.06	ລົງປັກຫລັກໝາຍ, ປ້າຍ	ສຳເລັດແຕ່ປີ2017	
C2.11	ສະນັບສະໜຸນການເຄື່ອນໄຫວກວດກາລາດຕະເວນຂອງຈຸດກວດກາ	ສຳເລັດ 100%	
C2.12	ສະນັບສະໜຸນກອງທຶນອະນຸລັກຂອງຊຸມຊົນ	ສຳເລັດແຕ່ປີ2017	
C2.13	ລົງປ່ອຍກອງທຶນອະນຸລັກຂອງຊຸມຊົນ	ສຳເລັດແຕ່ປີ2017	
ອົງປະກອບ 3. ການຕິດຕາມບ້ານເປົ້າໝາຍໃນເຂດອ່າງໂຕ່ງນ້ຳຍ້ອງ			
C3	ລົງຢ້ຽມຢາມບ້ານເປົ້າໝາຍໂຄງການທີ່ຜ່ານມາ	ສຳເລັດ 100%	
ອົງປະກອບ 4. ການບໍລິຫານ ແລະ ຄຸ້ມຄອງໂຄງການ			
C4.01	ຈັດພິມ ແລະ ສຳເນົາຕ່າງໆຂອງກອງປະຊຸມ	ສຳເລັດ 100%	
C4.05	ບຳລຸງຮັກສາພາຫະນະ ແລະ ອຸປະກອນ	ສຳເລັດ 100%	
C4.06	ອຸປະກອນຮັບໃຊ້ຫ້ອງການຕ່າງໆ	ສຳເລັດ 100%	
C4.07	ບຳລຸງຮັກສາຫ້ອງການຂັ້ນແຂວງ	ສຳເລັດແຕ່ປີ2017	
C4.08	ບຳລຸງຮັກສາຫ້ອງການຂັ້ນເມືອງ	ສຳເລັດແຕ່ປີ2017	
C4.09	ປະເມີນຜົນ	ລໍຖ້າທີມງານຈາກ ກປສ	ບໍ່ສຳເລັດ

IV. ຕົວຊີ້ວັດ ທີ່ກຳນົດໄວ້ໃນກອບຂອງໂຄງການ:

ຕົວຊີ້ວັດ	ແຜນການ	ສຳເລັດ	ໝາຍເຫດ
ຕົວຊີ້ວັດ 1: ເຂດທີ່ຢູ່ໃນການປົກປັກຮັກສາຊີວະນາໆພັນ ທີ່ຖືກວັດແທກໂດຍຄະແນນປະສິດທິຜົນຂອງການຄຸ້ມຄອງ (ປະຈຳປີ)	46	????	ຍັງບໍ່ທັນໄດ້ຖືກປະເມີນຈາກ ກປສ ສະນັ້ນຈຶ່ງບໍ່ມີຄະແນນສະສົມອອກມາເທື່ອ
ຕົວຊີ້ວັດ 5: ການຈັດຕັ້ງບ້ານ ທີ່ຢູ່ໃນແລະອ້ອມແອ້ມປ່າສະຫງວນ ທີ່ສະໜັບສະໜຸນໂດຍ ກປສ ທີ່ເຮັດຕາມເງື່ອນໄຂຂອງສັນຍາອະນຸລັກ (ສະສົມ)	3	9	
1.1: ຜູ້ໄດ້ຮັບຜົນປະໂຫຍດໂດຍກົງ (ໃນນີ້ມີຍິງເທົ່າໃດ) ໂດຍວັດແທກຕາມຈຳນວນພະນັກງານທີ່ໄດ້ເຂົ້າໃນຊຸດຮຽນສຳເລັດ ກ່ຽວກັບພື້ນຖານຂອງການຄຸ້ມຄອງການຄ້າສັດປ່າຫຼືປ່າໄມ້	158	214	
ຈຳນວນແມ່ຍິງ	32	67	
% ແມ່ຍິງ	20%	31,3%	

V. ສະຫລຸບການນຳໃຊ້ງົບປະມານໃນປີ 2018

1. ງົບປະມານທັງໝົດ (ທີເຊັນສັນຍາ): 2.796.000.000 ກີບ.
2. ເງິນທີ່ໄດ້ຮັບທັງໝົດ: 2.496.371.490 ກີບ.
3. ກປສ ຈ່າຍໂດຍກົງ 535,825,990 ກີບ.
4. ເງິນທີ່ໄດ້ສະຫຼຸບ: 326.397.000 ກີບ.
5. ເງິນທີ່ຍັງບໍ່ໄດ້ສະຫຼຸບ(ເງິນຈ່າຍລ່ວງໜ້າ): 0 ກີບ.
6. ເງິນທີ່ຂໍຄ່ຽນໃນງວດຕໍ່ໄປ: 252.500.000 ກີບ.
7. ມື້ສົ່ງບົດລາຍງານການເງິນສຸດທ້າຍ: 8 ຕຸລາ 2018.

VI. ບົດຮຽນທີ່ຖອດຖອນໄດ້ໃນປີ 2018

ດ້ານດີ

1). ຄະນະຊີ້ນຳໂຄງການຂັ້ນແຂວງ, ຂັ້ນເມືອງ ເອົາໃຈໃສ່ ຊີ້ນຳຢ່າງໃກ້ສິດ.

2). ພະນັກງານໃນທີມງານຂອງໂຄງການຂັ້ນເມືອງເອົາໃຈໃສ່ ແລະໃຫ້ຄວາມສຳຄັນຕໍ່ວຽກງານໂຄງການ.

3). ກຸ່ມບ້ານ, ອຳນາດການປົກຄອງບ້ານ ແລະ ປະຊາຊົນໃຫ້ຄວາມຮ່ວມມື ແລະຈິງໃຈຕໍ່ວຽກງານຂອງ ໂຄງການ.

ດ້ານອ່ອນແລະ ຂໍ້ຄົງຄ້າງ

ໂຄງການບໍ່ສາມາດປະຕິບັດວຽກງານ ໃນງວດ 3 ແລະ ງວດ 4 ຕາມແຜນປີທີ່ໄດ້ກຳນົດໄວ້ ເນື່ອງຈາກ ທາງ ກປສ ບໍ່ສາມາດຄ່ຽນເງິນມາໃຫ້ທ່ວງທັນຕາມເວລາ.

ວິທີການແກ້ໄຂ

ສະເໜີ ກປສ ປັບປຸງວິທີການຄ່ຽນເງິນໃຫ້ແກ່ທ້ອງຖິ່ນ ໃຫ້ທັນເວລາຕາມແຜນການທີ່ກຳນົດໄວ້ ຕື່ມອີກ.

VII. ຂໍ້ສະເໜີຕໍ່ຫ້ອງການກອງທຶນປົກປັກຮັກສາສິ່ງແວດລ້ອມ

1. ຂໍໃຫ້ທາງ ກປສ ປັບປຸງລະບົບການຄ່ຽນເງິນໃຫ້ທ້ອງຖິ່ນທ່ວງທັນກັບເວລາຕາມແຜນການເດືອນ , ແຜນ3 ເດືອນ ແລະ ແຜນ1 ປີ ທີ່ວາງໄວ້
2. ຂໍໃຫ້ທາງ ກປສ ພິຈາລະນາອະນຸມັດ ໃນການສະເໜີແຜນການສືບຕໍ່ໂຄງການໄລຍະທີ່3 ຍ້ອນວ່າວຽກໂຄງການໄລຍະທີ່2 ປະຕິບັດສຳເລັດຕາມແຜນການທີ່ກຳນົດໄວ້ແລ້ວ 100% ຄາດວ່າສາມາດປິດໂຄງການໄດ້ໃນທ້າຍປີ2019 ຫລື ໄລຍະຕົ້ນປີ 2020ນີ້.

ຕົວຊີ້ວັດຂອງໂຄງການ ໂດຍອີງໃສ່ລະດັບຄາດໝາຍຮ່າງຕົວຊີ້ວັດເບື້ອງຕົ້ນຂອງ ກປສ ຂໍປັບປຸງ

ຕົວຊີ້ວັດຜົນໄດ້ຮັບລະດັບຈຸດປະສົງລວມ	ໝາຍເຫດ	ຫົວໜ່ວຍ ວັດແທກ	ຂໍ້ມູນພື້ນຖານ	ຄ່າສະສົມ					ຄວາມຖີ່ການລາຍງານ	ແຫຼ່ງຂໍ້ມູນ/ວິທີທະຍາ	ຜູ້ເກັບກຳຂໍ້ມູນ	ລາຍລະອຽດ (ນິຍາມຕົວຊີ້ວັດ)
				ປີ1	ປີ2	ປີ3	ປີ4	ປີ5				
ຕົວຊີ້ວັດ 1: ເຂດທີ່ຢູ່ໃນການປົກປັກຮັກສາຊີວະນາໆພັນ ທີ່ຖືກວັດແທກໂດຍຄະແນນປະສິດທິຜົນຂອງການຄຸ້ມຄອງ (ປະຈຳປີ)		(% ຂອງຄະແນນສູງສຸດ)	ປ່າສະຫງວນ/ປ່າປ້ອງກັນ	40	44	46	48	51	ປະຈຳປີ	ຄະແນນປະສິດທິຜົນຂອງການຄຸ້ມຄອງ (ເຄື່ອງມືຕິດຕາມປະສິດທິຜົນຂອງການຄຸ້ມຄອງ) ແລະຂົງເຂດທີ່ນຳໃຊ້.	ຂຄຊປ ຫຼື ອົງການຈັດຕັ້ງໂຄງການຍ່ອຍ	ວັດແທກດ້ວຍເຄື່ອງມືຕິດຕາມປະສິດທິຜົນຂອງການຄຸ້ມຄອງ. ການປ່ຽນແປງຂອງຄະແນນ 15% ຖືວ່າດີຂຶ້ນ.

ຕົວຊີ້ວັດ 5: ການຈັດຕັ້ງບ້ານ ທີ່ຢູ່ໃນແລະອ້ອມແອ້ມປ່າສະຫງວນ ທີ່ສະໜັບສະໜູນໂດຍ ກປສ ທີ່ເຮັດຕາມເງື່ອນໄຂຂອງສັນຍາອະນຸລັກ (ສະສົມ)		ຈຳນວນ	ທັງໝົດ=9	0	3	3	3	0	ປະຈຳປີ	ບົດລາຍງານປະຈຳປີຈາກຜູ້ຮັບຜິດຊອບໂຄງການ ທີ່ປະຕິບັດຕາມແຜນ ແລະ ຈ່າຍເງິນໃຫ້ການຈັດຕັ້ງບ້ານ	ຂຄຊປ ຫຼື ອົງການຈັດຕັ້ງໂຄງການຍ່ອຍ	ສາມາດປະຕິບັດໄດ້ຕາມເນື້ອໃນ ຖ້າຫາກປະຕິບັດຕາມ ຂະບວນການເຂົ້າຮ່ວມຂອງຊຸມຊົນ: ວາງແຜນນຳໃຊ້ທີ່ດິນແບບມີສ່ວນຮ່ວມ, ສ້າງເປັນບ້ານອະນຸລັກ ໄດ້ຫຼາຍກວ່າ 50%
1.1: ຜູ້ໄດ້ຮັບຜົນປະໂຫຍດໂດຍກົງ (ໃນນີ້ມີຍິງເທົ່າໃດ) ໂດຍວັດແທກຕາມຈຳນວນພະນັກງານທີ່ໄດ້ເຂົ້າໃນຊຸດຮຽນສຳເລັດ ກ່ຽວກັບພື້ນຖານຂອງການຄຸ້ມຄອງການຄ້າສັດປ່າຫຼືປ່າໄມ້		ຈຳນວນ	ລວມ 2016	0	45	45	45	0	ປະຈຳປີ	ບົດບັນທຶກໃນໂຄງການຍ່ອຍ	ຂຄຊປ ຫຼື ອົງການຈັດຕັ້ງໂຄງການຍ່ອຍ	ຫົວເລື້ອງທີ່ພົວພັນກັບຈຸດປະສົງຂອງ ກປສ
			ປັບປຸງ 2017	1148	193	158	103	103				
			ຝຶກລະດັບຊາດ	1148	193	158	103	103				
			ຝຶກລະດັບຕ່າງປະເທດ	0	0	0	0	0				
			%ແມ່ຍິງ	20.0	20.0	20.0	20.0	20.0				

VIII. ແຜນຈັດຕັ້ງປະຕິບັດໃນປີ 2019

ລະຫັດ ກິດຈະ ກຳ	ລາຍການ	2019					
		ງົບປະມານໃຫມ່ ປີ 2019 (ຈ່າຍຕາມໄຕມາດ) xລ້ານກີບ					
		ງ1	ງ2	ງ3	ງ4	ລວມ	ໝາຍ ເຫດ
	ອົງປະກອບ 1. ສ້າງຄວາມເຂັ້ມແຂງ						
C1.04	ໄປປະຊຸມນຳ ກປສ ແລະ ພາກສ່ວນທີ່ກ່ຽວຂ້ອງ	25			15	40	
C1.05	ສ້າງຄວາມເຂັ້ມແຂງໃນການສືບຕໍ່ໂຄງການໃໝ່		30			30	
C1.06	ທັດສະນະພາຍໃນ					-	
C1.07	ກອງປະຊຸມສ້າງຄວາມເຂົ້າໃຈຂັ້ນເມືອງ		25			25	
C1.08	ກອງປະຊຸມສ້າງຄວາມເຂົ້າໃຈຂັ້ນແຂວງ			25		25	
C1.09	ກອງປະຊຸມສ້າງຄວາມເຂົ້າໃຈຂັ້ນບ້ານ ແລະ ຕິດຕາມ	55				55	
	ອົງປະກອບ 2. ສະນັບສະໜຸນການຄຸ້ມຄອງປ່າປ້ອງກັນແຫ່ງຊາດນ້ຳມ່ອມ-ນ້ຳຍ້ອງ						
	ອົງປະກອບ 3 ການຕິດຕາມບ້ານເປົ້າໝາຍໃນເຂດອ່າງໂຕ່ງນ້ຳມ່ອມ-ນ້ຳຍ່ອງ						
C3	ລົງຢ້ຽມຢາມບ້ານເປົ້າໝາຍໂຄງການທີ່ຜ່ານມາ		50			50	
	ອົງປະກອບ 4. ການບໍລິຫານ ແລະ ຄຸ້ມຄອງໂຄງການ						
C4.01	ຈັດພິມ ແລະ ສຳເນົາຕ່າງໆຂອງກອງປະຊຸມ	4	2	3	3	12	
C4.05	ບຳລຸງຮັກສາພາຫະນະ ແລະ ອຸປະກອນ	3,5	1,5	3	2	10	
C4.06	ອຸປະກອນຮັບໃຊ້ຫ້ອງການຕ່າງໆ	1	0, 8	1	0,7	3,5	
C4.07	ບຳລຸງຮັກສາຫ້ອງການຂັ້ນແຂວງ					-	
C4.08	ບຳລຸງຮັກສາຫ້ອງການຂັ້ນເມືອງ		0,8		1,2	2	
	ລາຄາລວມຍອດທັງໝົດ	88,5	110,1	32	21,9	252,5	

ບໍລິຄຳໄຊ, ວັນທີ 03 DEC 2018

ຫົວໜ້າພະແນກ ກະສິກຳ ແລະ ປ່າໄມ້ ແຂວງບໍລິຄຳໄຊ (ຜູ້ຊີ້ນຳໂຄງການ)	ຫົວໜ້າຂະແໜງປ່າໄມ້ແຂວງ	ຫົວໜ້າໂຄງການ
ພອນສະຫວັນ ຫອມນະບຸນລັດ	ສອນໄຊ ພົມມະວົງ	ມະນີແສງເພັດ ພະຄຸນທອງ
Mr Phonsavanh HOMNABOUNLATH	Sonexay PHOMMAVONG	Mr. Manysengphet PHAKHOUNTHONG

1. ຮ່ວມກອງປະຊຸມນຳ ກປສ



2. ກອງປະຊຸມປະຈຳ 3 ເດືອນ, 6 ເດືອນ ແລະ 1 ປີ





